**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

1509

ເລກທີ.............../ກຊສ

ນະຄອນຫຼວງວຽງຈັນ, ວັນທີ 21 ມີນາ 2019

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງນ້ຳໃຕ້ດິນ

- ອີງຕາມມາດຕາ 47 ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ ເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມໜັງສືສະເໜີຂອງກົມຊັບພະຍາກອນນ້ຳ ສະບັບເລກທີ 0211/ກຊສ.ກຊນ, ລົງວັນທີ 6 ມີນາ 2019.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາການນຳໃຊ້ ແລະ ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ເພື່ອຮັບປະກັນການນຳໃຊ້ນ້ຳໃຕ້ດິນໃຫ້ຖືກຕ້ອງ ຕາມເປົ້າໝາຍ, ປະຢັດ, ສົມເຫດສົມຜົນ, ມີປະສິດທິຜົນ ແນໃສ່ຮັກສາຄວາມສົມດຸນທາງດ້ານປະລິມານ ແລະ ຄຸນນະພາບຂອງນ້ຳໃຕ້ດິນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໄປຄຽງຄູ່ກັບການປົກປັກຮັກສາສິ່ງ ແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຄຸ້ມຄອງນ້ຳໃຕ້ດິນ**

ການຄຸ້ມຄອງນ້ຳໃຕ້ດິນ ແມ່ນ ຂະບວນການ ສຳຫຼວດ, ເກັບກຳຂໍ້ມູນ, ຂຶ້ນບັນຊີແຫຼ່ງນ້ຳໃຕ້ດິນ ແລະ ບໍ່ນ້ຳໃຕ້ດິນ, ການກຳນົດເຂດທີ່ມີຄວາມສ່ຽງຕໍ່ປະລິມານ ແລະ ຄຸນນະພາບນ້ຳໃຕ້ດິນ ເພື່ອວາງແຜນຄຸ້ມຄອງ, ຕິດຕາມ ກວດກາການຂຸດເຈາະ ຫຼື ຊີເຈາະ ແລະ ການນຳໃຊ້ນ້ຳໃຕ້ດິນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ແຫຼ່ງນ້ຳໃຕ້ດິນ** ໝາຍເຖິງ ແຫຼ່ງນ້ຳທີ່ຢູ່ພື້ນດິນເປັນຊັ້ນ, ເປັນຜົ້ງ, ເປັນສາຍ ຫຼື ປົນກັນກັບເນື້ອດິນ ເປັນຕົ້ນ ນ້ຳສ້າງ, ນ້ຳອອກບໍ່, ນ້ຳແຮ່ທາດ, ນ້ຳບາດານ, ນ້ຳລອດພື້ນ;

2. **ນ້ຳໃຕ້ດິນ** ໝາຍເຖິງ ນ້ຳທຳມະຊາດທີ່ຢູ່ພື້ນດິນ ເຊັ່ນ ນ້ຳສ້າງ, ນ້ຳບາດານ, ນ້ຳອອກບໍ່, ນ້ຳລອດພື້ນ;

3. **ນ້ຳບາດານ** ໝາຍເຖິງ ນ້ຳໃຕ້ດິນທີ່ຂຸດເຈາະ ຫຼື ຊີເຈາະຈາກຊັ້ນໃຫ້ນ້ຳ ທີ່ຢູ່ໃຕ້ດິນໃນລະດັບຄວາມເລິກສິບຫ້າ ແມັດຂຶ້ນໄປ ຊຶ່ງຊັ້ນດັ່ງກ່າວນີ້ແມ່ນຊັ້ນໃຫ້ນ້ຳແບບປິດທີ່ມີຊັ້ນດິນ ແລະ ຊັ້ນຫີນອີ່ມຕົວດ້ວຍນ້ຳ;

4. **ນ້ຳສ້າງ** ໝາຍເຖິງ ນ້ຳໃຕ້ດິນທີ່ຢູ່ຊັ້ນໃຫ້ນ້ຳແບບເປີດທີ່ສາມາດນຳເອົານ້ຳຂຶ້ນມາໃຊ້ໄດ້ ໂດຍການຂຸດຈົນເຖິງຊັ້ນໃຫ້ນ້ຳ;

5. **ການຂຸດເຈາະ ຫຼື ຊີເຈາະ ນ້ຳໃຕ້ດິນ** ໝາຍເຖິງ ການຂຸດເຈາະ ຫຼື ຊີເຈາະ ພື້ນດິນໂດຍຜ່ານຊັ້ນດິນ, ຊັ້ນຫີນ ເພື່ອນຳເອົານ້ຳຂຶ້ນໄປໃຊ້ເຂົ້າໃນເປົ້າໝາຍຕ່າງໆ;

6. **ການສຳຫຼວດແຫຼ່ງນ້ຳໃຕ້ດິນ** ໝາຍເຖິງ ການເກັບກຳຂໍ້ມູນ ແລະ ສຶກສາສະພາບ ແຫຼ່ງນ້ຳໃຕ້ດິນ ເປັນຕົ້ນ ຈຳນວນແຫຼ່ງ, ຜົ້ງ, ສາຍນ້ຳ, ປະລິມານ ແລະ ຄຸນນະພາບນ້ຳໃຕ້ດິນ, ຊັ້ນດິນ, ຊັ້ນຫີນ, ລະດັບນ້ຳ ເພື່ອກຳນົດ ທີ່ຕັ້ງ, ຈຸດພິກັດ, ຂອບເຂດ ແລະ ໃສ່ເຄື່ອງໝາຍ;

7. **ການເກັບກຳຂໍ້ມູນບໍ່ນ້ຳໃຕ້ດິນ** ໝາຍເຖິງ ການເກັບກຳ ແລະ ສັງລວມ ຈຳນວນນ້ຳສ້າງ ແລະ ນ້ຳໃຕ້ດິນ ລວມທັງທີ່ຕັ້ງ, ຈຸດພິກັດ, ຄວາມກວ້າງຄວາມເລິກ, ລະດັບນ້ຳ, ຄຸນນະພາບນ້ຳໃຕ້ດິນຂອງບໍ່ ທີ່ໄດ້ຂຸດເຈາະ ຫຼື ຊີເຈາະແລ້ວ.

### **ມາດຕາ 4 ຫຼັກການຄຸ້ມຄອງນ້ຳໃຕ້ດິນ**

ການຄຸ້ມຄອງ ແລະ ນຳໃຊ້ນ້ຳໃຕ້ດິນ ໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ແຜນຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ;

2. ຮັບປະກັນການນຳໃຊ້ນ້ຳໃຕ້ດິນຢ່າງສົມເຫດສົມຜົນ, ມີປະສິດທິພາບ, ປະສິດທິຜົນ ແລະ ປົກປັກຮັກສານ້ຳໃຕ້ດິນ ໃຫ້ມີຄວາມສົມດຸນທາງດ້ານ ປະລິມານ, ຄຸນນະພາບ ແລະ ມີຜົນກະທົບໜ້ອຍທີ່ສຸດຕໍ່ລະບົບນິເວດ ແລະ ສິ່ງແວດລ້ອມ;

3. ຮັບປະກັນການມີສ່ວນຮ່ວມຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງໃນການຄຸ້ມຄອງ ການນຳໃຊ້ ແລະ ປົກປັກຮັກສານ້ຳໃຕ້ດິນ;

4. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຕົນໄດ້ກໍ່ຂຶ້ນຈາກການນຳໃຊ້, ການເຄື່ອນໄຫວດຳເນີນທຸລະກິດ ຫຼື ກິດຈະກຳ ກ່ຽວກັບນ້ຳໃຕ້ດິນ.

### **ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ ແລະ ການເຄື່ອນໄຫວທຸລະກິດ ຫຼື ກິດຈະກຳ ກ່ຽວກັບນ້ຳໃຕ້ດິນ.

## ໝວດທີ 2
## ການສຳຫຼວດ ແລະ ການຂຶ້ນບັນຊີນ້ຳໃຕ້ດິນ

**ມາດຕາ 6 ການສຳຫຼວດນ້ຳໃຕ້ດິນ**

ການສຳຫຼວດນ້ຳໃຕ້ດິນ ແມ່ນ ການສຳຫຼວດແຫຼ່ງນ້ຳ ແລະ ການເກັບກຳຂໍ້ມູນບໍ່ນ້ຳໃຕ້ດິນ ເພື່ອເປັນຂໍ້ມູນໃນການສ້າງແຜນທີ່ນ້ຳໃຕ້ດິນ ແລະ ວາງແຜນຄຸ້ມຄອງການນຳໃຊ້ນ້ຳໃຕ້ດິນແຕ່ລະເປົ້າໝາຍ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນທ້ອງຖິ່ນ ເປັນຜູ້ຮັບຜິດຊອບສຳຫຼວດນ້ຳໃຕ້ດິນໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອຂຶ້ນບັນຊີນ້ຳໃຕ້ດິນ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນ.

**ມາດຕາ 7 ການຂຶ້ນບັນຊີນ້ຳໃຕ້ດິນ**

ການຂຶ້ນບັນຊີນ້ຳໃຕ້ດິນ ແມ່ນ ການເກັບກຳ, ສັງລວມ ແລະ ໃສ່ລະຫັດແຫຼ່ງນ້ຳໃຕ້ດິນ ແລະ ບໍ່ນ້ຳໃຕ້ດິນ ລວມທັງຂໍ້ມູນກ່ຽວຂ້ອງຕ່າງໆ ເຂົ້າໃນຖານຂໍ້ມູນ ແລະ ສ້າງເປັນແຜນທີ່ນ້ຳໃຕ້ດິນ ເພື່ອເປັນເຄື່ອງມືໃນການຕິດຕາມ ກວດກາ, ປະເມີນສະພາບ, ວິເຄາະ ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ນຳໃຊ້ນ້ຳໃຕ້ດິນ.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບຂຶ້ນບັນຊີນ້ຳໃຕ້ດິນໃນທ້ອງຖິ່ນຂອງຕົນ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ກົມຊັບພະຍາກອນນ້ຳ ເປັນຜູ້ສັງລວມການຂຶ້ນບັນຊີນ້ຳໃຕ້ດິນໃນຂອບເຂດທົ່ວປະເທດ ຕາມການສັງລວມລາຍງານຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ.

**ມາດຕາ 8 ການກຳນົດເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ**

ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ ແມ່ນ ເຂດນ້ຳໃຕ້ດິນທີ່ມີ ຊັ້ນນ້ຳເຄັມ, ການເຈືອປົນຂອງສານເຄມີອັນຕະລາຍ ໂດຍທຳມະຊາດ ແລະ ມະນຸດສ້າງຂຶ້ນ ລວມທັງເຂດທີ່ມີການນຳໃຊ້ນ້ຳໃຕ້ດິນໃນປະລິມານຫຼາຍເກີນກວ່າປະລິມານນ້ຳທີ່ໄຫຼລົງສູ່ຊັ້ນນ້ຳໃຕ້ດິນ ອາດຈະເຮັດໃຫ້ເກີດການຍຸບຕົວຂອງຊັ້ນດິນ, ການແຜ່ກະຈາຍຂອງນ້ຳເຄັມເຂົ້າສູ່ຊັ້ນນ້ຳໃຕ້ດິນ, ການຫຼຸດລົງຂອງລະດັບນ້ຳໃນຊັ້ນນ້ຳໃຕ້ດິນ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ຊຶ່ງເຂດດັ່ງກ່າວແມ່ນໃຫ້ຈຳກັດການນຳໃຊ້ ຫຼື ກຳນົດເປັນເຂດຫວງຫ້າມ ເພື່ອປ້ອງກັນ ຊີວິດ, ສຸຂະພາບຂອງຄົນ, ສັດ ແລະ ການຍຸບຕົວຂອງດິນ.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ກຳນົດເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ ໂດຍຜ່ານຂະບວນການສຳຫຼວດ ແລະ ຂຶ້ນບັນຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ແລະ 7 ຂອງຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບພະແນກການ, ອົງການປົກຄອງເມືອງ, ເທດສະບານ, ນະຄອນ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງ.



m—

## ໝວດທີ 3
## ການນຳໃຊ້ນ້ຳໃຕ້ດິນ

**ມາດຕາ 9 ການນຳໃຊ້ນ້ຳໃຕ້ດິນ**

ການນຳໃຊ້ນ້ຳໃຕ້ດິນ ແມ່ນ ການນຳໃຊ້ນ້ຳເຂົ້າໃນເປົ້າໝາຍໃດໜຶ່ງ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 46 ຂອງກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017.

ການນຳໃຊ້ນ້ຳໃຕ້ດິນ ແບ່ງອອກເປັນ ສາມ ຂະໜາດຄື ຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່.

**ມາດຕາ 10 ການນຳໃຊ້ນ້ຳໃຕ້ດິນຂະໜາດນ້ອຍ**

ການນຳໃຊ້ນ້ຳໃຕ້ດິນຂະໜາດນ້ອຍ ເພື່ອບໍລິໂພກ, ອຸປະໂພກ, ການປູກຝັງ, ລ້ຽງສັດ ແລະ ຫັດຖະກຳ ທີ່ຕິດພັນກັບການດຳລົງຊີວິດຂອງປະຊາຊົນ ແລະ ນຳໃຊ້ເຂົ້າໃນ ສຳນັກງານ, ຫ້ອງການ, ສະຖານທີ່ສຶກສາ, ສະຖານທີ່ຮັບໃຊ້ວຽກງານສາທາລະນະສຸກ, ສະຖານທີ່ທາງປະຫວັດສາດ, ສະຖານທີ່ທາງວັດທະນະທຳ, ສວນສາທາລະນະ ທີ່ມີປະລິມານນຳໃຊ້ນ້ຳ ຕ່ຳກວ່າ ຊາວ ແມັດກ້ອນ ຕໍ່ວັນ ແມ່ນບໍ່ຈຳເປັນຕ້ອງຂໍອະນຸຍາດ ແຕ່ຕ້ອງໄດ້ແຈ້ງການນຳໃຊ້ນ້ຳ ຕໍ່ອົງການປົກຄອງບ້ານ ເພື່ອຕິດຕາມການນຳໃຊ້ ແລ້ວສັງລວມ ແລະ ລາຍງານຕໍ່ຫ້ອງການຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ.

ຜູ້ທີ່ນຳໃຊ້ນ້ຳໃຕ້ດິນຂະໜາດນ້ອຍມາກ່ອນ ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ຕ້ອງໄດ້ແຈ້ງການນຳໃຊ້ນ້ຳ ຕໍ່ອົງການປົກຄອງບ້ານ ພາຍໃນ ສາມສິບ ວັນ ນັບແຕ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ອອກແຈ້ງການ ເປັນຕົ້ນໄປ.

ສຳລັບຜູ້ທີ່ມີຈຸດປະສົງນຳໃຊ້ນ້ຳໃຕ້ດິນຂະໜາດນ້ອຍ ທີ່ຍັງບໍ່ມີການຂຸດເຈາະ ຕ້ອງໄດ້ແຈ້ງອົງການປົກຄອງບ້ານ ລ່ວງໜ້າ ສິບ ວັນລັດຖະການ ກ່ອນຈະຂໍອະນຸຍາດຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 11 ການນຳໃຊ້ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ນ້ຳໃຕ້ດິນຂະໜາດກາງ ເຂົ້າໃນເປົ້າໝາຍກິດຈະການ ຊົນລະປະທານ, ປູກຝັງ, ລ້ຽງສັດ, ອຸດສາຫະກຳ, ສາທາລະນະສຸກ ແລະ ກິດຈະການອື່ນ ທີ່ມີປະລິມານການນຳໃຊ້ນ້ຳ ແຕ່ ຊາວ ແມັດກ້ອນ ຫາ ຫ້າສິບ ແມັດກ້ອນຕໍ່ວັນ ຕ້ອງໄດ້ຂໍອະນຸຍາດນຳໃຊ້ນ້ຳໃຕ້ດິນ ກ່ອນການຂໍອະນຸຍາດຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຈາກຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ນ້ຳໃຕ້ດິນຂະໜາດໃຫຍ່ ເຂົ້າໃນເປົ້າໝາຍກິດຈະການ ຊົນລະປະທານ, ປູກຝັງ, ລ້ຽງສັດ, ອຸດສາຫະກຳ, ແຮ່ທາດ, ທ່ອງທ່ຽວ, ສາທາລະນະສຸກ ແລະ ກິດຈະການອື່ນ ທີ່ມີປະລິມານການນຳໃຊ້ນ້ຳຫຼາຍກວ່າ ຫ້າສິບ ແມັດກ້ອນຂຶ້ນໄປ ຕໍ່ວັນ ຕ້ອງໄດ້ຂໍອະນຸຍາດ ນຳໃຊ້ຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບພະຍາກອນນ້ຳ ເປັນຜູ້ກຳນົດແບບພິມໃບອະນຸຍາດນຳໃຊ້ນ້ຳໃຕ້ດິນ ຂະໜາດ ກາງ ແລະ ໃຫຍ່.

**ມາດຕາ 12 ການຂໍອະນຸຍາດນຳໃຊ້ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ຕ້ອງປະກອບເອກະສານຕົ້ນຕໍ ເພື່ອຂໍອະນຸຍາດ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດນຳໃຊ້ນ້ຳໃຕ້ດິນ;
2. ໃບທະບຽນວິສາຫະກິດ;
3. ໃບຢັ້ງຢືນທີ່ຢູ່;
4. ສຳເນົາສຳມະໂນຄົວ ຫຼື ສຳເນົາບັດປະຈຳຕົວ;
5. ສຳເນົາໃບຕາດິນ. ກໍລະນີເຊົ່າທີ່ດິນຂອງບຸກຄົນອື່ນ ຕ້ອງມີໃບຍິນຍອມຈາກເຈົ້າຂອງສິດນຳໃຊ້ທີ່ດິນ;
6. ແຜນວາດທີ່ຕັ້ງຂອງບໍ່ນ້ຳໃຕ້ດິນ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ ການຂໍອະນຸຍາດນຳໃຊ້ນ້ຳໃຕ້ດິນ ຕາມຂອບເຂດຄວາມຮັບຜິດຊອບທີ່ໄດ້ກຳນົດໄວ້ໃນມາດຕາ 11 ແລະ 12 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ສຳລັບຜູ້ນຳໃຊ້ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ທີ່ນຳໃຊ້ນ້ຳໃຕ້ດິນ ກ່ອນຂໍ້ຕົກລົງສະບັບນີ້ ຕ້ອງສະເໜີຂໍອະນຸຍາດນຳໃຊ້ນ້ຳໃຕ້ດິນ ພາຍໃນ ຫົກສິບ ວັນ ນັບແຕ່ວັນທີ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອອກແຈ້ງການເປັນຕົ້ນໄປ.

ໃບອະນຸຍາດການນຳໃຊ້ນ້ຳໃຕ້ດິນ ມີອາຍຸ ສອງ ປີ ໃນກໍລະນີຕ້ອງການສືບຕໍ່ນຳໃຊ້ ຕ້ອງສະເໜີຂໍຕໍ່ໃບອະນຸຍາດ ພາຍໃນ ສາມສິບ ວັນ ກ່ອນໃບອະນຸຍາດໝົດອາຍຸ.

ພາຍຫຼັງທີ່ໄດ້ຮັບອະນຸຍາດການນຳໃຊ້ນ້ຳໃຕ້ດິນ ທີ່ຍັງບໍ່ທັນໄດ້ຂຸດເຈາະ ຫຼື ຊີເຈາະ ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ນັ້ນ ຕ້ອງຂໍອະນຸຍາດຂຸດເຈາະ ຫຼື ຊີເຈາະ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 13 ການກວດກາຄຸນນະພາບນ້ຳໃຕ້ດິນ**

ພາຍຫຼັງທີ່ໄດ້ຮັບອະນຸຍາດນຳໃຊ້ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ກ່ອນການນຳໃຊ້ນ້ຳຕົວຈິງເຂົ້າໃນແຕ່ລະເປົ້າໝາຍ ຜູ້ທີ່ໄດ້ຮັບອະນຸຍາດ ຕ້ອງນຳເອົານ້ຳນັ້ນໄປກວດຄຸນນະພາບນ້ຳໃຕ້ດິນ ແລະ ຢັ້ງຢືນຜົນການວິໄຈຈາກຫ້ອງທົດລອງວິໄຈຂອງພາກລັດ ຫຼື ເອກະຊົນທີ່ຖືກຮັບຮອງຕາມກົດໝາຍ ແລະ ລະບຽບການ ໂດຍໃຫ້ອີງໃສ່ມາດຕະຖານຄຸນນະພາບນ້ຳໃຕ້ດິນ ທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍມາດຕະຖານສິ່ງແວດລ້ອມແຫ່ງຊາດ.

ກ່ອນຈະຕໍ່ໃບອະນຸຍາດນຳໃຊ້ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ໃນແຕ່ລະຄັ້ງ ຕ້ອງຜ່ານການກວດກາຄຸນນະພາບນ້ຳໃຕ້ດິນ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້.

ໃນກໍລະນີເກີດໄພພິບັດທາງທຳມະຊາດ ຫຼື ມົນລະພິດທີ່ເກີດຈາກ ທຳມະຊາດ ຫຼື ມະນຸດສ້າງຂຶ້ນ ເປັນຕົ້ນ ມົນລະພິດທາງນ້ຳ, ດິນ, ອາກາດ ຊຶ່ງອາດຈະສົ່ງຜົນກະທົບຕໍ່ນ້ຳໃຕ້ດິນ ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ນ້ຳ ຕ້ອງນຳເອົານ້ຳໄປກວດຄຸນນະພາບນ້ຳໃຕ້ດິນທັນທີຫຼັງຈາກເຫດການດັ່ງກ່າວໄດ້ຢຸດຕິລົງ ຫຼື ກ່ອນການນຳໃຊ້ນ້ຳໃຕ້ດິນ ເພື່ອຮັບປະກັນໃຫ້ການນຳໃຊ້ນ້ຳໃຕ້ດິນມີຄວາມປອດໄພຕໍ່ ຊີວິດ, ສຸຂະພາບຂອງ ຄົນ ແລະ ສັດ ລວມທັງສິ່ງແວດລ້ອມ.

**ມາດຕາ 14 ການຕິດຕັ້ງໝໍ້ວັດແທກປະລິມານການນຳໃຊ້ນ້ຳໃຕ້ດິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດການນຳໃຊ້ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ຫຼັງ

ຈາກສຳເລັດການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນແລ້ວ ໃນເວລາຕິດຕັ້ງອຸປະກອນ ແລະ ເຄື່ອງຈັກສູບນ້ຳ ແມ່ນຕ້ອງຕິດຕັ້ງໝໍ້ວັດແທກປະລິມານການນຳໃຊ້ນ້ຳໃຕ້ດິນ ເພື່ອຕິດຕາມປະລິມານການນຳໃຊ້ນ້ຳໃຕ້ດິນ.

**ມາດຕາ 15 ການຕິດຕາມກວດກາການນຳໃຊ້ນ້ຳໃຕ້ດິນ**

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ເປັນຜູ້ຕິດຕາມກວດກາການນຳໃຊ້ນ້ຳໃຕ້ດິນຂະໜາດ ນ້ອຍ ແລະ ກາງ ໂດຍປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງວຽງຈັນ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ໃນທຸກ ສາມ ເດືອນ.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຕິດຕາມກວດກາການນຳໃຊ້ນ້ຳໃຕ້ດິນຂະໜາດໃຫຍ່ ໂດຍປະສານສົມທົບກັບພະແນກການ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ກົມຊັບພະຍາກອນນ້ຳ ແລະ ອົງການປົກຄອງແຂວງ, ນະຄອນຫຼວງວຽງຈັນ ໃນທຸກ ຫົກ ເດືອນ.

**ມາດຕາ 16 ການຢຸດເຊົາການນຳໃຊ້ນ້ຳໃຕ້ດິນ**

ຜູ້ນຳໃຊ້ນ້ຳໃຕ້ດິນ ທຸກຂະໜາດທີ່ມີຈຸດປະສົງ ຢຸດເຊົານຳໃຊ້ນ້ຳໃຕ້ດິນ ດ້ວຍເຫດຜົນໃດກໍຕາມ ຕ້ອງປະຕິບັດ ດັ່ງນີ້:

1. ສຳລັບການຢຸດເຊົາການນຳໃຊ້ນ້ຳໃຕ້ດິນຂະໜາດນ້ອຍ ຜູ້ນຳໃຊ້ສາມາດ ອັດ, ຖົມ ດ້ວຍຕົນເອງໄດ້ແຕ່ຕ້ອງໃຫ້ຢູ່ໃນສະພາບດີ ແລະ ຮັບປະກັນບໍ່ໃຫ້ມີຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ພ້ອມທັງລາຍງານໃຫ້ອົງການ ປົກຄອງບ້ານທີ່ກ່ຽວຂ້ອງຮັບຊາບ.

2. ສຳລັບການຢຸດເຊົາການນຳໃຊ້ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ຜູ້ນຳໃຊ້ຕ້ອງ ອັດ, ຖົມ ແລະ ຟື້ນຟູໃຫ້ຄືນສູ່ສະພາບປົກກະຕິ ໂດຍສອດຄ່ອງກັບຫຼັກການ ແລະ ວິທີການ ໂດຍກ່ອນການອັດ, ຖົມບໍ່ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່, ຕ້ອງເຮັດບົດລາຍງານ ແຜນການອັດ, ຖົມ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມ ເພື່ອກວດກາ ແລະ ຮັບຮອງ;

3. ພາຍໃນ ເຈັດ ວັນລັດຖະການ ທີ່ສຳເລັດການອັດ, ຖົມບໍ່ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ຜູ້ນຳໃຊ້ນ້ຳ ຕ້ອງລາຍງານໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ໝວດທີ 4**

**ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ**

**ມາດຕາ 17 ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈະດຳເນີນການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

1. ສຳຫຼວດພື້ນທີ່ກ່ອນດຳເນີນ ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ເພື່ອວາງແຜນການຂຸດເຈາະ ຫຼື ຊີເຈາະ;

2. ສຳລັບນ້ຳບາດານ ຕ້ອງຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ແຕ່ໜ້າດິນຈົນຮອດຊັ້ນໃຫ້ນ້ຳ ເລິກກວ່າ ສິບຫ້າແມັດ ຂຶ້ນໄປ;

3. ສຳລັບນ້ຳສ້າງ ຕ້ອງຂຸດເຈາະ ແຕ່ໜ້າດິນເລິກຮອດຊັ້ນໃຫ້ນ້ຳ;

4. ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕ້ອງຫຼີກລ້ຽງ ບໍລິເວນໃກ້ຄຽງສະຖານທີ່ທາງປະຫວັດສາດ ຫຼື ເຂດທີ່ສະຫງວນໄວ້ ຍົກເວັ້ນການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນໃນເຂດບໍລິເວນດັ່ງກ່າວ ເພື່ອສຶກສາຄົ້ນຄວ້າ ແລະ ວິໄຈດ້ານປະລິມານ ແລະ ຄຸນນະພາບຂອງນ້ຳໃຕ້ດິນ;

5. ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນໃນທີ່ດິນຂອງຕົນ ຕ້ອງຫ່າງຈາກເຂດແດນຂອງຜູ້ອື່ນຢ່າງໜ້ອຍ ສອງ ແມັດ ຂຶ້ນໄປ ແລະ ຕ້ອງຮັບປະກັນບໍ່ໃຫ້ດິນເຈື່ອນ ຫຼື ຍຸບຕົວ ຊຶ່ງອາດຈະກະທົບຕໍ່ຕອນດິນທີ່ຕິດຈອດກັນ;

6. ໄລຍະຫ່າງຂອງບໍ່ນ້ຳໃຕ້ດິນທີ່ຈະ ຂຸດເຈາະ ຫຼື ຊີເຈາະ ຕ້ອງຫ່າງກັນ ສິບຫ້າ ແມັດ ຂຶ້ນໄປ;

7. ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕ້ອງຫ່າງຈາກວິດຖ່າຍ, ຂຸມນ້ຳເປື້ອນ, ຄອກສັດ ແລະ ຂຸມຖົ້ມຂີ້ເຫຍື້ອ ສິບຫ້າ ແມັດ ຂຶ້ນໄປ;

8. ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕ້ອງຫ່າງຈາກພື້ນທີ່ສານເຄມີຕົກຄ້າງ, ບ່ອນຝັງສົບຄົນ ໜຶ່ງຮ້ອຍ ແມັດ ຂຶ້ນໄປ ຍົກເວັ້ນການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນໃນເຂດບໍລິເວນດັ່ງກ່າວ ເພື່ອສຶກສາຄົ້ນຄວ້າ ແລະ ວິໄຈດ້ານປະລິມານ ແລະ ຄຸນນະພາບຂອງນ້ຳໃຕ້ດິນ;

9. ຜູ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕ້ອງມີວິຊາການດ້ານການຂຸດເຈາະ ຫຼື ຊີເຈາະ, ນັກທໍລະນີວິທະຍາ, ຫ້ອງການ, ເຄື່ອງກົນຈັກທີ່ໄດ້ມາດຕະຖານ ແລະ ມີອຸປະກອນຄົບຊຸດ;

10.ໃນກໍລະນີທີ່ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຫາກໄດ້ກໍ່ຄວາມເສຍຫາຍຕໍ່ຊັບສິນຂອງບຸກຄົນອື່ນ ຕ້ອງໄດ້ຢຸດເຊົາ ພ້ອມທັງສ້ອມແປງໃຫ້ຄືນສູ່ສະພາບເດີມ ຫຼື ແທນຄ່າເສຍຫາຍຕໍ່ຊັບສິນທີ່ຕົນໄດ້ກໍ່ຂຶ້ນ ລວມທັງຮັບປະກັນໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໜ້ອຍທີ່ສຸດ;

11. ພາຍຫຼັງ ຜູ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ສຳເລັດແລ້ວ ຕ້ອງນຳເອົານ້ຳໄປວິໄຈຄຸນນະພາບຢູ່ໃນບັນດາຫ້ອງວິໄຈ ແລະ ລາຍງານຜົນ ໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອເປັນຂໍ້ມູນໃນການພິຈາລະນາໃຫ້ນຳໃຊ້ນ້ຳໃຕ້ດິນ.

ນອກຈາກເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕານີ້ແລ້ວ ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຍັງຕ້ອງໄດ້ປະຕິບັດຕາມລະບຽບການສະເພາະ ທີ່ຂະແໜງການກ່ຽວຂ້ອງໄດ້ກຳນົດໄວ້ ໂດຍອີງຕາມເປົ້າໝາຍການນຳໃຊ້.

**ມາດຕາ 18 ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຂະໜາດນ້ອຍ**

ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຂະໜາດນ້ອຍ ແມ່ນການຂຸດເຈາະ ຫຼື ຊີເຈາະ ທີ່ນຳໃຊ້ທໍ່ກັນເຈື່ອນທີ່ມີຂະໜາດເສັ້ນຜ່າກາງ ໜຶ່ງຮ້ອຍ ມີລີແມັດ ລົງມາ.

ຜູ້ທີ່ຈະນຳໃຊ້ນ້ຳໃຕ້ດິນຂະໜາດນ້ອຍເຂົ້າໃນເປົ້າໝາຍ ຕາມທີ່ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ ເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017 ຕ້ອງຂໍອະນຸຍາດຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຈາກຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 19 ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່**

ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນຂະໜາດກາງ ແມ່ນ ການຂຸດເຈາະ ຫຼື ຊີເຈາະ ທີ່ນຳໃຊ້ທໍ່ກັນເຈື່ອນທີ່ມີຂະໜາດເສັ້ນຜ່າກາງ ໃຫຍ່ກວ່າ ໜຶ່ງຮ້ອຍ ແຕ່ບໍ່ເກີນ ສອງຮ້ອຍ ມີລີແມັດ.

ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນຂະໜາດໃຫຍ່ ແມ່ນ ການຂຸດເຈາະ ຫຼື ຊີເຈາະ ທີ່ນຳໃຊ້ທໍ່ກັນເຈື່ອນທີ່ມີຂະໜາດເສັ້ນຜ່າກາງ ໃຫຍ່ກວ່າ ສອງຮ້ອຍ ມີລີແມັດຂຶ້ນໄປ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ນ້ຳໃຕ້ດິນເຂົ້າໃນເປົ້າໝາຍ ຕາມທີ່ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ ເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017 ສຳລັບການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ຕ້ອງຂໍອະນຸຍາດຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ.

ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ຕ້ອງດຳເນີນໂດຍຜູ້ໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ທີ່ໄດ້ຮັບອະນຸຍາດເທົ່ານັ້ນ.

ການພິຈາລະນາຂໍອະນຸຍາດ ຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ແຕ່ລະຄັ້ງ ຕ້ອງໃຫ້ສຳເລັດ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**ມາດຕາ 20 ການຂໍອະນຸຍາດ ຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ຕ້ອງປະກອບເອກະສານຂໍອະນຸຍາດ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ໃບອະນຸຍາດການນຳໃຊ້ນ້ຳໃຕ້ດິນ;
4. ສຳເນົາໃບຕາດິນ, ກໍລະນີເຊົ່າທີ່ດິນຂອງບຸກຄົນອື່ນ ຕ້ອງມີໃບຍິນຍອມຈາກເຈົ້າຂອງສິດນຳໃຊ້ທີ່ດິນ;
5. ແຜນທີ່ສັງເຂບສະແດງທີ່ຕັ້ງບໍ່ນ້ຳໃຕ້ດິນ, ສິ່ງປຸກສ້າງ ແລະ ບໍລິເວນທີ່ຈະໃຊ້ນ້ຳ;
6. ສຳເນົາສຳມະໂນຄົວ ຫຼື ສຳເນົາບັດປະຈຳຕົວ.

**ມາດຕາ 21 ສະຖານທີ່ສຳລັບການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ**

ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕ້ອງດຳເນີນຢູ່ໃນສະຖານທີ່ ດັ່ງນີ້:

1. ບໍ່ແມ່ນພື້ນທີ່ຕ່ຳ ແລະ ບໍ່ມີນ້ຳເປື້ອນກັກຂັງ, ໄຫຼຜ່ານ ຫຼື ໄຫຼຈາກໜ້າດິນ ລົງໃນບໍ່ ຫຼື ຂ້າງບໍ່;

2. ບໍລິເວນທີ່ຈະຂຸດເຈາະ ຫຼື ຊີເຈາະບໍ່ນ້ຳໃຕ້ດິນ ຈະຕ້ອງມີພື້ນທີ່ຫວ່າງພຽງພໍ ສຳລັບການສ້ອມແປງບໍ່ນ້ຳ ຫຼື ເຄື່ອງຈັກສູບນ້ຳ;

3. ທີ່ຕັ້ງຂອງບໍ່ເຈາະ ຕ້ອງຢູ່ໃນເຂດທີ່ກຳນົດໄວ້ໃຫ້ມີການນຳໃຊ້ນ້ຳໃຕ້ດິນ ໂດຍອີງຕາມການກຳນົດເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ, ບໍ່ແມ່ນເຂດຫວງຫ້າມ ໂດຍຫ່າງຈາກວິດຖ່າຍ, ຂຸມຖິ້ມຂີ້ເຫຍື້ອ ຫຼື ຮ່ອງລະບາຍນ້ຳເປື້ອນ ສິບຫ້າ ແມັດ ຂຶ້ນໄປ ແລະ ຫ່າງຈາກສາຍຄາ ຫຼາຍກວ່າ ໜຶ່ງ ແມັດ.

**ມາດຕາ 22 ຂະໜາດຂອງບໍ່ນ້ຳໃຕ້ດິນ ທີ່ຈະຂຸດເຈາະ ຫຼື ຊີເຈາະ**

ຂະໜາດຂອງບໍ່ນ້ຳໃຕ້ດິນທີ່ຈະຂຸດເຈາະ ຫຼື ຊີເຈາະໃຫ້ປະຕິບັດ ດັ່ງນີ້:

1. ຊ່ອງວ່າງລະຫວ່າງທໍ່ກັນເຈື່ອນ ຂອງບໍ່ນ້ຳ ນັບແຕ່ໜ້າດິນ ເລິກລົງໄປຮອດ ຫົກ ແມັດ ຈະຕ້ອງມີຂະໜາດ ຫຼາຍກວ່າ ສິບ ຊັງຕີແມັດ;

2. ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ທີ່ພົບຊັ້ນນ້ຳມີຄຸນນະພາບນ້ຳຕ່ຳ ຕ້ອງເຈາະຜ່ານໃຫ້ເຖິງຊັ້ນນ້ຳທີ່ມີຄຸນນະພາບນ້ຳດີ ແລະ ຂະໜາດຊ່ອງວ່າງລະຫວ່າງທໍ່ກັນເຈື່ອນຂອງບໍ່ນ້ຳ ໃຫຍ່ກວ່າ ສິບ ຊັງຕີແມັດ ຕາມຮອບຂອງທໍ່ກັນເຈື່ອນ ຕາມຫຼັກການຂອງການອັດບໍ່ ແລະ ອັດຂ້າງບໍ່;



m/

3. ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ທີ່ເຈາະຖືກຊັ້ນຫີນແຂງທີ່ຄົງໂຕຢູ່ໄດ້ ໃຫ້ເຈາະຕາມຂະໜາດຄວາມເໝາະສົມ.

**ມາດຕາ 23 ການຄຸ້ມຄອງເຄື່ອງຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ**

ຜູ້ທີ່ມີເຄື່ອງຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນທຸກຂະໜາດ ກ່ອນ ຫຼື ຫຼັງ ຂໍ້ຕົກລົງສະບັບນີ້ ຕ້ອງແຈ້ງ ແລະ ຂຶ້ນທະບຽນນຳຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ພາຍໃນ ເກົ້າສິບ ວັນ ນັບແຕ່ວັນທີ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ອອກແຈ້ງການເປັນຕົ້ນໄປ.

ເຄື່ອງຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ທີ່ໄດ້ຂຶ້ນທະບຽນແລ້ວ ໃນກໍລະນີເປ່ເພບໍ່ສາມາດນຳໃຊ້ໄດ້ ເຈົ້າຂອງເຄື່ອງ ຕ້ອງໄດ້ແຈ້ງຕໍ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ບ່ອນທີ່ຂຶ້ນທະບຽນນັ້ນ.

ໃນກໍລະນີທີ່ມີການມອບ, ໂອນ ຫຼື ຂາຍເຄື່ອງຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຜູ້ທີ່ໄດ້ຮັບມອບ, ໂອນ ຫຼື ຊື້ ຕ້ອງໄດ້ແຈ້ງຕໍ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ບ່ອນທີ່ຂຶ້ນທະບຽນນັ້ນ.

ສຳລັບເຄື່ອງຂຸດເຈາະ ຫຼື ຊີເຈາະ ທີ່ກ່ຽວຂ້ອງກັບວຽກງານນ້ຳໃຕ້ດິນ ຊຶ່ງໄດ້ຂຶ້ນທະບຽນ ແລະ ຄຸ້ມຄອງໂດຍຂະແໜງການທີ່ກ່ຽວຂ້ອງ ຕ້ອງແຈ້ງຕໍ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ເພື່ອເປັນການເກັບກຳຂໍ້ມູນ ແລະ ຂຶ້ນບັນຊີ.

**ມາດຕາ 24 ການລາຍງານຂໍ້ມູນນ້ຳໃຕ້ດິນ ສຳລັບໂຄງການພັດທະນາ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນຜູ້ພັດທະນາໂຄງລ່າງພື້ນຖານ ລວມທັງ ການຂຸດຄົ້ນ, ສຳຫຼວດ ແຮ່ທາດ ແລະ ຂຸດຄົ້ນບໍ່ແຮ່ ໃນໄລຍະດຳເນີນການສຳຫຼວດນັ້ນ ຫາກພົບເຫັນບໍ່ນ້ຳໃຕ້ດິນ ຕ້ອງລາຍງານຂໍ້ມູນນ້ຳໃຕ້ດິນ ເປັນຕົ້ນ ຊັ້ນດິນ, ຊັ້ນຫີນ, ຊັ້ນໃຫ້ນ້ຳ, ຄວາມເລິກຂອງການຂຸດເຈາະໃນແຕ່ລະຊັ້ນ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນທີ່ພົບເຫັນເປັນຕົ້ນໄປ.

## ໝວດທີ 5
## ການບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ

**ມາດຕາ 25 ການອະນຸຍາດບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ດຳເນີນທຸລະກິດບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ເປັນຕົ້ນ ການສຶກສາ, ສຳຫຼວດ, ຂຸດເຈາະ ຫຼື ຊີເຈາະ ຊັ້ນດິນ, ປະເມີນປະລິມານ ແລະ ກວດຄຸນນະພາບນ້ຳໃຕ້ດິນ ຕ້ອງໄດ້ຂໍອະນຸຍາດດຳເນີນທຸລະກິດ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍການເຫັນດີດ້ານວິຊາການຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ.

ການຂໍອະນຸຍາດບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ;
2. ໃບທະບຽນວິສາຫະກິດ;

3. ຊື່ວະປະຫວັດຂອງວິຊາການ;

4. ປະກາສະນີຍະບັດຂອງວິຊາການ;

5. ຂໍ້ມູນຂອງວັດຖຸປະກອນ ແລະ ເຄື່ອງຈັກ;

6. ເອກະສານອື່ນທີ່ກ່ຽວຂ້ອງຕາມທີ່ໄດ້ກໍານົດໄວ້ໃນລະບຽບການ.

**ມາດຕາ 26 ເງື່ອນໄຂຂອງຜູ້ບໍລິການຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນ**

ຜູ້ບໍລິການຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນ ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ, ບົດວິພາກເສດຖະກິດ-ເຕັກນິກ ໂດຍສອດຄ່ອງກັບ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ;

2. ມີນັກທໍລະນີວິທະຍາ ຫຼື ຜູ້ທີ່ມີວິຊາສະເພາະໃດໜຶ່ງທີ່ໃກ້ຄຽງ ທີ່ມີວຸດທິການສຶກສາຊັ້ນກາງຂຶ້ນໄປ ຢ່າງໜ້ອຍ ໜຶ່ງຄົນ ແລະ ມີປະສົບການຢ່າງໜ້ອຍ ສອງ ປີ;

3. ມີນັກວິຊາການທີ່ມີປະສົບການດ້ານການຂຸດເຈາະ ຫຼື ຊີເຈາະ ຢ່າງໜ້ອຍ ໜຶ່ງຄົນ ແລະ ມີປະສົບການຢ່າງໜ້ອຍ ສອງ ປີ;

4. ມີຫ້ອງການ ແລະ ເຄື່ອງກົນຈັກທີ່ໄດ້ມາດຕະຖານ ແລະ ມີອຸປະກອນຂຸດເຈາະ ຫຼື ຊີເຈາະ ຄົບຊຸດ.

ສໍາລັບບໍລິການຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນຂະໜາດນ້ອຍ ຕ້ອງມີນັກວິຊາການທີ່ໄດ້ຮັບການຝຶກອົບຮົມ.

**ມາດຕາ 27 ການຢັ້ງຢືນດ້ານວິຊາການ ກ່ຽວກັບການບໍລິການຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນ**

ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຢັ້ງຢືນດ້ານວິຊາການ ກ່ຽວກັບການບໍລິການຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ເພື່ອເປັນບ່ອນອີງໃຫ້ແກ່ການອະນຸຍາດຂອງຂະແໜງອຸດສາຫະກໍາ ແລະ ການຄ້າ.

ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ເປັນຜູ້ຢັ້ງຢືນດ້ານວິຊາການ ກ່ຽວກັບການບໍລິການຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນຂະໜາດນ້ອຍ ເພື່ອເປັນບ່ອນອີງໃຫ້ແກ່ການອະນຸຍາດຂອງຂະແໜງອຸດສາຫະກໍາ ແລະ ການຄ້າ.

ການຢັ້ງຢືນດ້ານວິຊາການ ກ່ຽວກັບການບໍລິການຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນ ຕາມທີ່ໄດ້ກໍານົດໄວ້ໃນວັກໜຶ່ງ ແລະ ສອງ ຂອງມາດຕານີ້ ຕ້ອງພິຈາລະນາໃຫ້ສໍາເລັດພາຍໃນ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

ກົມຊັບພະຍາກອນນໍ້າ ເປັນຜູ້ກໍານົດແບບພິມໃບຢັ້ງຢືນດ້ານວິຊາການ ກ່ຽວກັບການບໍລິການຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນ.

## ໝວດທີ 6
## ຄ່ານໍາໃຊ້ນໍ້າໃຕ້ດິນ, ຄ່າທໍານຽມ ແລະ ຄ່າບໍລິການກ່ຽວກັບນໍ້າໃຕ້ດິນ

**ມາດຕາ 28 ຄ່ານໍາໃຊ້ນໍ້າໃຕ້ດິນ, ຄ່າທໍານຽມ ແລະ ຄ່າບໍລິການ**

ຄ່ານໍາໃຊ້ນໍ້າໃຕ້ດິນ ແມ່ນ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍ ອັດຕາຄ່າຊັບພະຍາກອນທໍາມະຊາດ.

ຄ່າທໍານຽມ ແລະ ຄ່າບໍລິການ ກ່ຽວກັບນໍ້າໃຕ້ດິນ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດວ່າ

ດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 29 ການເກັບຄ່ານຳໃຊ້ນ້ຳໃຕ້ດິນ, ຄ່າທຳນຽມ ແລະ ຄ່າບໍລິການ**

ຂະແໜງການເງິນ ເປັນຜູ້ຮັບຜິດຊອບເກັບຄ່ານຳໃຊ້ ແລະ ຄ່າທຳນຽມກ່ຽວກັບນ້ຳໃຕ້ດິນ ຕາມກົດໝາຍ ແລະ ລະບຽບການ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບເກັບຄ່າບໍລິການກ່ຽວກັບນ້ຳໃຕ້ດິນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ສິດ ແລະ ພັນທະກ່ຽວກັບ ການນຳໃຊ້, ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ

**ມາດຕາ 30 ສິດ ແລະ ພັນທະ ຂອງຜູ້ນຳໃຊ້ນ້ຳໃຕ້ດິນ**

ໃນການນຳໃຊ້ນ້ຳໃຕ້ດິນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດ ແລະ ພັນທະ ດັ່ງນີ້:

1. ນຳໃຊ້ນ້ຳໃຕ້ດິນໃຫ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ສົມເຫດສົມຜົນ, ມີປະສິດທິຜົນ, ຫຼີກລ້ຽງຜົນກະທົບຕໍ່ການນຳໃຊ້ຂອງຜູ້ອື່ນ ແລະ ສິ່ງແວດລ້ອມ;
2. ປົກປັກຮັກສາບໍ່ນ້ຳໃຕ້ດິນ ໃຫ້ຢູ່ໃນສະພາບດີ;
3. ເສຍຄ່າຊັບພະຍາກອນນ້ຳ, ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບນ້ຳໃຕ້ດິນ ຍົກເວັ້ນຜູ້ນຳໃຊ້ນ້ຳໃຕ້ດິນ ຂະໜາດນ້ອຍ;
4. ຜູ້ນຳໃຊ້ນ້ຳໃຕ້ດິນຂະໜາດ ກາງ ແລະ ໃຫຍ່ ຕ້ອງລາຍງານກ່ຽວກັບປະລິມານ, ຄຸນນະພາບນ້ຳໃຕ້ດິນ ແລະ ການນຳໃຊ້ນ້ຳ ໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສັງລວມທຸກ ສາມເດືອນ. ໃນກໍລະນີເຫັນວ່າຜິດປົກກະຕິ ແລະ ມີຜົນກະທົບຢ່າງຮ້າຍແຮງ ຕ້ອງລາຍງານຢ່າງທັນການໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນທ້ອງຖິ່ນ ທີ່ກ່ຽວຂ້ອງ;
5. ຜູ້ນຳໃຊ້ນ້ຳໃຕ້ດິນຂະໜາດນ້ອຍ ຕ້ອງແຈ້ງຕໍ່ອົງການປົກຄອງບ້ານທີ່ກ່ຽວຂ້ອງ ຢ່າງທັນການ ໃນກໍລະນີຄຸນນະພາບນ້ຳໃຕ້ດິນມີການປ່ຽນແປງ ເປັນຕົ້ນ ນ້ຳຂຸ່ນ, ມີສານເຄມີຮົ່ວໄຫຼລົງ ຫຼື ເຈືອປົນໃນນ້ຳໃຕ້ດິນ ເພື່ອລາຍງານຕໍ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຊອກຫາວິທີແກ້ໄຂ;
6. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 31 ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ**

ຜູ້ໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ມີສິດ ແລະ ພັນທະ ດັ່ງລຸ່ມນີ້:

1. ດຳເນີນການໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດ;
2. ຂໍຕໍ່ ຫຼື ຢຸດເຊົາການບໍລິການ ໂດຍຕ້ອງແຈ້ງ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາ;
3. ລາຍງານຜົນຂອງການສຶກສາ, ສຳຫຼວດ, ປະເມີນປະລິມານ, ກວດກາ ແລະ ຢັ້ງຢືນຄຸນນະພາບນ້ຳໃຕ້ດິນ ທີ່ໄດ້ຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນພາຍໃນ ສິບຫ້າ ວັນ ຫຼັງຈາກວັນທີ່ສຳເລັດບັນດາໜ້າວຽກດັ່ງກ່າວໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
4. ຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ;

5. ຕ້ອງອັດ ຫຼື ຖົມຄືນ ບໍ່ນ້ຳໃຕ້ດິນ ທີ່ບໍ່ສາມາດນຳໃຊ້ໄດ້ ພ້ອມທັງ ລາຍງານໃຫ້ອົງການປົກຄອງບ້ານ ແລະ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

6. ໃຊ້ແທນຄ່າເສຍຫາຍ ໃນກໍລະນີການຂຸດເຈາະ ຫຼື ຊີເຈາະບໍ່ນ້ຳໃຕ້ດິນ ທີ່ກໍ່ຄວາມເສຍຫາຍໃຫ້ແກ່ຊັບສິນຂອງຜູ້ອື່ນຕາມກົດໝາຍ ແລະ ລະບຽບການ ທີ່ເກີດຈາກການກະທຳຂອງວິຊາການຂອງຕົນ;

7. ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ໃຫ້ມີຜົນກະທົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມ;

8. ການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຫາກພົບເຫັນວັດຖຸບູຮານ, ຊາກດຶກດຳບັນ ຫຼື ແຮ່ທາດມີຄ່າ, ເສດຖະກິດ ຫຼື ທາງດ້ານສຶກສາໃນດ້ານທໍລະນີວິທະຍາ ຕ້ອງລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຊາບທັນທີ;

9. ປະຕິບັດພັນທະຕ່າງໆໃຫ້ລັດຕາມກົດໝາຍ ແລະ ລະບຽບການ;

10. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 8
## ຂໍ້ຫ້າມ

### ມາດຕາ 32 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ນ້ຳໃຕ້ດິນ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ກົດໝາຍ;
2. ຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ໃນເຂດຫວງຫ້າມ;
4. ຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ, ຖົມ ຫຼື ປັບແປງໜ້າດິນທີ່ຈະກໍ່ໃຫ້ເກີດມີການເຊາະເຈື່ອນ ຫຼື ຍຸບຕົວຂອງດິນ ທີ່ສົ່ງຜົນກະທົບຕໍ່ນ້ຳໃຕ້ດິນ;
5. ປ່ອຍນ້ຳເປື້ອນ, ສານເຄມີທີ່ເປັນອັນຕະລາຍ, ຖິ້ມສິ່ງເສດເຫຼືອລົງໃສ່ບໍ່ນ້ຳໃຕ້ດິນ ຫຼື ເຂດໃກ້ຄຽງແຫຼ່ງນ້ຳໃຕ້ດິນ ຊຶ່ງຈະພາໃຫ້ແຫຼ່ງນ້ຳໃຕ້ດິນຕື້ນເຂີນ, ບົກແຫ້ງ, ເນົ່າເໝັນ ຫຼື ເປັນພິດ;
6. ຂົນຍ້າຍ ຫຼື ເຊື່ອງເອົາວັດຖຸບູຮານ, ຊາກດຶກດຳບັນ ຫຼື ແຮ່ທາດມີຄ່າ ຫຼື ວັດຖຸທາງດ້ານວັດທະນະທຳ ແລະ ເສດຖະກິດ ຫຼື ທາງດ້ານການສຶກສາໃນດ້ານທໍລະນີວິທະຍາ ທີ່ພົບເຫັນໃນເຂດທີ່ມີການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ;
7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

### ມາດຕາ 33 ຂໍ້ຫ້າມ ສຳລັບພະນັກງານ ຫຼື ເຈົ້າໜ້າທີ່

ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດອຳນາດ, ຕຳແໜ່ງ, ໜ້າທີ່ ກ່ຽວກັບວຽກງານນ້ຳໃຕ້ດິນ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ທວງເອົາ, ຂໍເອົາ, ຮັບເອົາສິນບົນຈາກຜູ້ນຳໃຊ້ນ້ຳໃຕ້ດິນ, ຜູ້ໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ;
3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ບໍ່ຖືກຕ້ອງຕໍ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຄື່ອນໄຫວວຽກງານກ່ຽວກັບນ້ຳໃຕ້ດິນ;
4. ເລັ່ນເລີ້ ຫຼື ເມີນເສີຍຕໍ່ການປະຕິບັດໜ້າທີ່, ກົດໜ່ວງ, ຖ່ວງດຶງ ການພິຈາລະນາເອກະສານກ່ຽວກັບວຽກງານນ້ຳໃຕ້ດິນ;

5. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ, ທຳລາຍເອກະສານກ່ຽວກັບວຽກງານນ້ຳໃຕ້ດິນ;

6. ຮັບຮອງໃຫ້ດຳເນີນການບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ຫຼື ອະນຸຍາດໃຫ້ດຳເນີນການຂຸດເຈາະ ຫຼື ຊີເຈາະ ແລະ ການນຳໃຊ້ນ້ຳໃຕ້ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 34 ຂໍ້ຫ້າມ ສຳລັບຜູ້ນຳໃຊ້ນ້ຳໃຕ້ດິນ**

ຫ້າມຜູ້ນຳໃຊ້ນ້ຳໃຕ້ດິນ ມີພຶດຕິກຳ ດັ່ງນີ້:

1. ໃຫ້ຢືມ, ມອບ ຫຼື ໂອນໃບອະນຸຍາດນຳໃຊ້ນ້ຳໃຕ້ດິນຂອງຕົນໃຫ້ຜູ້ອື່ນນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດ;

2. ລະເມີດເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດນຳໃຊ້ນ້ຳໃຕ້ດິນ;

3. ນຳໃຊ້ນ້ຳໃຕ້ດິນເກີນປະລິມານ ຂອງແຕ່ລະຂະໜາດ ແລະ ບໍ່ຖືກຕ້ອງຕາມເປົ້າໝາຍ;

4. ຍ້າຍ, ປ່ຽນແປງ ຫຼື ທຳລາຍເຄື່ອງໝາຍ ແລະ ໝໍ້ວັດແທກນ້ຳສຳລັບຜູ້ນຳໃຊ້ຂະໜາດ ກາງ ແລະ ໃຫຍ່;

5. ນາບຂູ່, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືຕໍ່ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຮັບຜິດຊອບ ກ່ຽວກັບນ້ຳໃຕ້ດິນ;

6. ໃຫ້ສິນບົນ ຫຼື ໃຫ້ຄຳໝັ້ນສັນຍາວ່າຈະໃຫ້ສິນບົນແກ່ພະນັກງານ ຫຼື ເຈົ້າໜ້າທີ່, ໃຫ້ຂໍ້ມູນບໍ່ຖືກກັບຄວາມເປັນຈິງ, ປອມແປງເອກະສານ ຫຼື ຕາປະທັບ;

7. ຫຼົບຫຼີກການປະຕິບັດພັນທະຕາມກົດໝາຍ ແລະ ລະບຽບການ;

8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 35 ຂໍ້ຫ້າມ ສຳລັບຜູ້ໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ**

ຫ້າມຜູ້ໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະ ມີພຶດຕິກຳ ດັ່ງນີ້:

1. ໃຫ້ຢືມ, ມອບ ຫຼື ໂອນໃບອະນຸຍາດການບໍລິການຂຸດເຈາະ ຫຼື ຊີເຈາະຂອງຕົນໃຫ້ຜູ້ອື່ນນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດ;

2. ດຳເນີນການບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນໃຫ້ຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ນຳໃຊ້ໃບອະນຸຍາດຂອງຜູ້ອື່ນ;

3. ນາບຂູ່, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືຕໍ່ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຮັບຜິດຊອບກ່ຽວກັບນ້ຳໃຕ້ດິນ;

4. ໃຫ້ສິນບົນ ຫຼື ໃຫ້ຄຳໝັ້ນສັນຍາວ່າຈະໃຫ້ສິນບົນແກ່ພະນັກງານ ຫຼື ເຈົ້າໜ້າທີ່, ໃຫ້ຂໍ້ມູນບໍ່ຖືກກັບຄວາມເປັນຈິງ, ປອມແປງເອກະສານ ຫຼື ຕາປະທັບ;

5. ຫຼົບຫຼີກການປະຕິບັດພັນທະຕາມກົດໝາຍ ແລະ ລະບຽບການ;

6. ຂົນຍ້າຍ ຫຼື ເຊື່ອງເອົາວັດຖຸບູຮານ, ຊາກດຶກດຳບັນ ຫຼື ແຮ່ທາດມີຄ່າ ຫຼື ວັດຖຸທາງດ້ານວັດທະນະທຳ ແລະ ເສດຖະກິດ ຫຼື ທາງດ້ານການສຶກສາໃນດ້ານທໍລະນີວິທະຍາ;

7. ລະເມີດເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ;

8. ໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ເກີນຂະໜາດທີ່ໄດ້ຮັບອະນຸຍາດ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 36 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຊັບພະຍາກອນນໍ້າ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນໍາໃຊ້ນໍ້າໃຕ້ດິນ, ດໍາເນີນການບໍລິການ ຂຸດເຈາະ ຫຼື ຊີເຈາະນໍ້າໃຕ້ດິນ ມາກ່ອນຂໍ້ຕົກລົງສະບັບນີ້ ມີຜົນສັກສິດແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 37 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງ ຫຼື ຂໍ້ກໍານົດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ

ສົມມາດ ພົລເສນາ